ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ ທ່ານ ນາງ ປານີ ຢາທໍ່ຕູ້ ເຄື່ອນໄຫວວຽກງານຢູ່ແຂວງຈຳປາສັກ




ໃນລະຫວ່າງວັນທີ 22-24 ກັນຍາ 2022 ທີ່ຜ່ານມາ, ທ່ານ ນາງ ປານີ ຢາທໍ່ຕູ້ ກຳມະການກົມການເມືອງສູນກາງພັກ, ຮອງປະທານປະເທດແຫ່ງ ສປປ ລາວ ພ້ອມດ້ວຍຄະນະໄດ້ເຄື່ອນໄຫວວຽກງານຢູ່ແຂວງຈຳປາສັກ ເຊິ່ງໄດ້ເດີນທາງຢ້ຽມຊົມສວນກາເຟ ບໍລິສັດ ສິມໄຊ, ສວນການກະເສດອາໂກຟາມ, ບໍລິສັດກາເຟ ດາວເຮືອງ, ເຂດເສດຖະກິດພິເສດປາກເຊ-ຍີ່ປຸ່ນ.

ທ່ານ ປອ ວິໄລວົງ ບຸດດາຄຳ ກຳມະການສູນກາງພັກ ເລຂາພັກແຂວງ ເຈົ້າແຂວງຈຳປາສັກ ໄດ້ລາຍງານການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ 2 ວາລະແຫ່ງຊາດ, ມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງອົງຄະນະພັກແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ

IX ຂອງແຂວງ ແລະ ວາລະຂອງແຂວງໃນໄລຍະ 6 ເດືອນຕົ້ນປີ 2022, ການຈັດຕັ້ງປະຕິບັດດຳລັດ 599/ລບ ແລະ ການຈັດຕັ້ງປະຕິບັດມາດຕະການປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ໂດຍສັງເຂບ.





#ຂ່າວໂດຍ: ນາງ ປາໃນ ພັນທະລາ

## ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ